ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0450/ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 01 ມີນາ 2012

# ຂໍ້ຕົກລົງ
# ວ່າດ້ວຍ ລະບຽບການຂໍອະນຸຍາດນຳເຂົ້າ ແລະ ຈຳໜ່າຍ ເຫຼັກ ແລະ ຊີມັງ

- ອີງຕາມ ກົດໝາຍວ່າດ້ວຍ ວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005;
- ອີງຕາມດຳລັດວ່າດ້ວຍ ການນຳເຂົ້າ ແລະ ການສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 6 ເມສາ 2011;
- ອີງຕາມດຳລັດ ວ່າດ້ວຍ ຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ ສະບັບເລກທີ 180/ນຍ, ລົງວັນທີ 7 ກໍລະກົດ 2009.

## ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ວາງອອກເພື່ອກຳນົດລະບຽບການຂໍອະນຸຍາດນຳເຂົ້າ ແລະ ຈຳໜ່າຍ ເຫຼັກ ແລະ ຊີມັງ ມາ ສປປ ລາວ ແລະ ເພື່ອເກັບກຳຂໍ້ມູນສະຖິຕິໃນການນຳເຂົ້າ ໂດຍຜ່ານລະບອບການອອກໃບອະນຸຍາດແບບອັດຕະໂນມັດ, ແຕ່ບໍ່ໄດ້ນຳໃຊ້ໃນການຈຳກັດປະລິມານ ຫຼື ມູນຄ່າໃນການນຳເຂົ້າ.

### ມາດຕາ 2 ອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້ :

(1) "ເຫຼັກ" ໝາຍເຖິງ ເຫຼັກເສັ້ນ ແລະ ເຫຼັກຮູບປະພັນຕ່າງໆ ທີ່ໄດ້ລະບຸໄວ້ໃນໝວດລະຫັດເຄົ້າ 7213; 7214; 7215; 7216 ຂອງປຶ້ມສາລະບານອັດຕາພາສີ ຂອງ ສປປ ລາວ.

(2) "ຊີມັງ" ໝາຍເຖິງ ມໍທາຣ, ຄອນກຣີດ ແລະ ຊີມັງ ທຸກຊະນິດທີ່ໄດ້ລະບຸໄວ້ໃນໝວດລະຫັດເຄົ້າ 2523 ແລະ 3816 ຂອງສາລະບານອັດຕາພາສີ ຂອງ ສປປ ລາວ.

### ມາດຕາ 3 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ຕໍ່ການນຳເຂົ້າ ເຫຼັກ ແລະ ຊີມັງ ມາ ສປປ ລາວ.

## ໝວດທີ 2
## ສິດ ແລະ ເງື່ອນໄຂໃນການນຳເຂົ້າ ແລະ ຈຳໜ່າຍ ເຫຼັກ ແລະ ຊີມັງ

### ມາດຕາ 4 ສິດ ແລະ ເງື່ອນໄຂໃນການນຳເຂົ້າເຫຼັກ ແລະ ຊີມັງ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ ສປປ ລາວ ຫຼື ຢູ່ຕ່າງປະເທດ ມີສິດນຳເຂົ້າ ເຫຼັກ ແລະ ຊີມັງ ໂດຍປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

### ມາດຕາ 5 ສິດ ແລະ ເງື່ອນໄຂໃນການຈຳໜ່າຍເຫຼັກ ແລະ ຊີມັງ

ຜູ້ທີ່ມີສິດຈຳໜ່າຍ ເຫຼັກ ແລະ ຊີມັງ ຕ້ອງແມ່ນຜູ້ທີ່ຂຶ້ນທະບຽນວິສາຫະກິດຈຳໜ່າຍວັດສະດຸກໍ່ສ້າງ ພາຍໃຕ້ກົດໝາຍ ຂອງ ສປປ ລາວ.

## ໝວດທີ 3
## ລະບຽບການຂໍອະນຸຍາດນຳເຂົ້າເຫຼັກ ຫຼື ຊີມັງ

### ມາດຕາ 6 ການຂໍອະນຸຍາດນຳເຂົ້າເຫຼັກ ແລະ ຊີມັງ

ການນຳເຂົ້າເຫຼັກ ຫຼື ຊີມັງ ຕ້ອງໄດ້ຮັບໃບອະນຸຍາດນຳເຂົ້າ ຈາກ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.

### ມາດຕາ 7 ເອກະສານປະກອບຂໍອະນຸຍາດນຳເຂົ້າເຫຼັກ ຫຼື ຊີມັງ

ເອກະສານທີ່ຕ້ອງປະກອບເພື່ອຂໍອະນຸຍາດນຳເຂົ້າເຫຼັກ ຫຼື ຊີມັງ ມີດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດນຳເຂົ້າ.
2. ສຳເນົາຂອງເອກະສານຕາມແຕ່ລະກໍລະນີ:
   - ໃບທະບຽນວິສາຫະກິດ ຫຼື ໃບທະບຽນສຳປະທານທີ່ຖືກຕ້ອງຕາມລະບຽບກົດໝາຍ (ສຳລັບວິສາຫະກິດທີ່ ຢູ່ ສປປ ລາວ).
   - ໃບທະບຽນວິສາຫະກິດອອກໃຫ້ໂດຍທາງການຂອງປະເທດກ່ຽວຂ້ອງທີ່ຖືກຕ້ອງ ຕາມລະບຽບກົດໝາຍ (ສຳລັບວິສາຫະກິດທີ່ບໍ່ຢູ່ ສປປ ລາວ).

ໃນກໍລະນີເອກະສານເປັນພາສາຕ່າງປະເທດ ຕ້ອງໄດ້ແປເປັນ ພາສາລາວ ໂດຍມີການຢັ້ງຢືນຈາກສຳນັກງານທະບຽນສານຂອງ ສປປ ລາວ.

### ມາດຕາ 8 ໃບອະນຸຍາດນຳເຂົ້າເຫຼັກ ຫຼື ຊີມັງ

ການອອກ, ການປ່ຽນແປງ ແລະ ອາຍຸ ຂອງ ໃບອະນຸຍາດນຳເຂົ້າເຫຼັກ ຫຼື ຊີມັງ ໃຫ້ປະຕິບັດຕາມດຳລັດ 180/ນຍ ລົງວັນທີ 7 ມິຖຸນາ 2009 ວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ. ໃບອະນຸຍາດນຳເຂົ້າເຫຼັກ ຫຼື ຊີມັງ ບໍ່ສາມາດໂອນໃຫ້ຜູ້ອື່ນໄດ້.

ມາດຕາ 9 ຄ່າທຳນຽມ ແລະ ຄ່າບໍລິການ

ຄ່າທຳນຽມ ແລະ ຄ່າບໍລິການ ສຳລັບການອອກ ແລະ ການປ່ຽນແປງ ຂອງໃບອະນຸຍາດນຳເຂົ້າເຫຼັກ ຫຼື ຊີມັງ ແມ່ນໃຫ້ອີງຕາມລັດຖະບັນຍັດ ສະບັບເລກທີ 03/ປປທ ລົງວັນທີ 19 ພະຈິກ 2008 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ.

ມາດຕາ 10 ການສະໜອງເອກະສານໃນເວລານຳເຂົ້າເຫຼັກ ຫຼື ຊີມັງ ຕົວຈິງ

ໃນເວລານຳເຂົ້າຕົວຈິງ, ຜູ້ນຳເຂົ້າຕ້ອງສະແດງເອກະສານດັ່ງຕໍ່ໄປນີ້ໃຫ້ແກ່ເຈົ້າໜ້າທີ່ພາສີ:

1. ໃບອະນຸຍາດນຳເຂົ້າເຫຼັກ ຫຼື ຊີມັງ ທີ່ອອກພາຍໃຕ້ຂໍ້ຕົກລົງສະບັບນີ້; ແລະ
2. ເອກະສານອື່ນໆຕາມລະບຽບການທາງພາສີ.

ໝວດທີ 3

ບົດບັນຍັດສຸດທ້າຍ

ມາດຕາ 11 ການຈັດຕັ້ງປະຕິບັດ

ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ເປັນເຈົ້າການໃນການປະສານສົມທົບກັບ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ສອດຄ່ອງ ແລະ ມີປະສິດທິຜົນ.

ມາດຕາ 12 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງ 30 ວັນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ,

ກະຊວງອຸດສາຫະກຳ ແລະ ການຄ້າ ລັດຖະມົນຕີ

ດຣ. ນາມ ວິຍະເກດ